ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 0439 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 30 ມີນາ 2023

# ຂໍ້ຕົກລົງ
# ວ່າດ້ວຍລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 0298/ກຊປ.ອຄ, ລົງວັນທີ 10 ມີນາ 2023.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານລິຂະສິ ແລະ ສິດກ່ຽວຂ້ອງກັບລິຂະສິດ ເປັນຕົ້ນ ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ການເປັນຜູ້ຕາງໜ້າ, ອົງການຈັດຕັ້ງລິຂະສິດແບບລວມໝູ່ ແລະ ອົງການຄຸ້ມຄອງວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອແນໃສ່ຜັນຂະຫຍາຍກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ລິຂະສິດ ແມ່ນສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕໍ່ຜົນງານປະດິດຄິດແຕ່ງທາງດ້ານ ສິລະປະກຳ, ວັນນະກຳ ຫຼື ວິທະຍາສາດ;

ສິດກ່ຽວຂ້ອງກັບລິຂະສິດ ແມ່ນສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕໍ່ຜົນງານທາງດ້ານການສະແດງ, ບັນທຶກສຽງ ຫຼື ພາບ ແລະ ກະຈາຍສຽງ-ແຜ່ພາບ ຜ່ານສັນຍານເຂົ້າລະຫັດ ຫຼື ບໍ່ເຂົ້າລະຫັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ແຈ້ງຂໍ້ມູນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ ທີ່ໄດ້ຍື່ນຄຳຮ້ອງຂໍແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃນການເປັນເຈົ້າຂອງສິດ ຫຼື ຜູ້ຖືສິດ;

2. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານທີ່ຍື່ນຂໍແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

3. **ເຈົ້າຂອງລິຂະສິດ ຫຼື ນັກປະພັນ** ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ໄດ້ປະດິດຄິດແຕ່ງຜົນງານທາງດ້ານສິລະປະກຳ, ວັນນະກຳ ແລະ ຜົນງານທາງດ້ານວິທະຍາສາດ ທີ່ສະແດງອອກດ້ວຍຮູບແບບ ຫຼື ວິທີການໃດໜຶ່ງ ຊຶ່ງລວມເອົາໝົດທຸກຄົນທີ່ມີສ່ວນຮ່ວມໃນການປະດິດຄິດແຕ່ງ ແລະ ສ້າງສັນຜົນງານ, ເວັ້ນເສຍແຕ່ໄດ້ຕົກລົງກັນເປັນຢ່າງອື່ນ;

4. **ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ** ໝາຍເຖິງ ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ ແລະ/ຫຼື ພາບ ຫຼື ຜູ້ກະຈາຍສຽງ-ແຜ່ພາບ ຫຼື ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບການໂອນສິດ ຫຼື ສືບທອດຜົນປະໂຫຍດ ຫຼື ສືບທອດມູນມໍລະດົກ ຫຼື ບຸກຄົນອື່ນທີ່ໄດ້ຮັບສິດຕາມກົດໝາຍ;

5. **ການອະນຸຍາດນຳໃຊ້** ໝາຍເຖິງ ການຕົກລົງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນຳໃຊ້ສິດກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕາມເງື່ອນໄຂຂອງສັນຍາ;

6. **ຜູ້ໄດ້ຮັບອະນຸຍາດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ຈາກເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

7. **ໃບໂອນສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນປະເພດໜຶ່ງທີ່ໄດ້ກຳນົດ ກ່ຽວກັບການໂອນສິດ;

8. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ;

9. **ຜູ້ມອບສິດ** ໝາຍເຖິງ ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ທີ່ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ ຫຼື ດຳເນີນການອື່ນ ໃນການແຈ້ງຂໍ້ມູນລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ;

10. **ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ໃຫ້ແຈ້ງຂໍ້ມູນລິຂະສິດ ຫຼື ດຳເນີນການອື່ນ ກ່ຽວກັບການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຢູ່ ສປປ ລາວ.

**ມາດຕາ 5 ຜົນງານລິຂະສິດ ແລະ ສິດກ່ຽວຂ້ອງຂອງລິຂະສິດທີ່ໄດ້ຮັບສິດການປົກປ້ອງ**

ຜົນງານລິຂະສິດ ແລະ ສິດກ່ຽວຂ້ອງຂອງລິຂະສິດທີ່ໄດ້ຮັບສິດການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 92 ແລະ 96 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຕ້ອງແມ່ນຜົນງານຕົ້ນສະບັບທີ່ແທ້ຈິງຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຊຶ່ງໄດ້ຖືກນຳສະເໜີໃນຮູບແບບ ຫຼື ວິທີໃດໜຶ່ງ ແລະ/ຫຼື ເຫັນໄດ້ເຖິງການສ້າງສັນທີ່ແຕກຕ່າງ.

ການປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ກວມເອົາຮູບແບບຂອງຜົນງານທີ່ສະແດງອອກ, ແຕ່ບໍ່ກວມເອົາເນື້ອໃນໃຈຄວາມຂອງຜົນງານນັ້ນ ຊຶ່ງບໍ່ຈຳເປັນຕ້ອງແມ່ນຜົນງານໃໝ່ ໂດຍອາດຈະເຄີຍມີມາກ່ອນ ຫຼື ມີຄົນອື່ນໄດ້ກ່າວເຖິງມາກ່ອນແລ້ວ. ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດອື່ນ ອາດຈະອີງໃສ່ເນື້ອໃນໃຈຄວາມດຽວກັນ ແຕ່ນຳໃຊ້ຫຼາຍຮູບແບບຂອງການສະແດງອອກໃນຕົ້ນສະບັບຂອງຕົນ ໂດຍປະຕິບັດໄດ້ຕາມເງື່ອນໄຂຂອງການປົກປ້ອງ ດັ່ງລຸ່ມນີ້:

1. ຜົນງານທີ່ຖືກບັນທຶກເຂົ້າໃນວັດຖຸທີ່ສາມາດຈັບບາຍໄດ້ ຫຼື ໄຟລເອເລັກໂຕຣນິກ;
2. ຜົນງານການສະແດງອອກຊົ່ວຄາວ ທີ່ສາມາດບັນທຶກໄດ້ດ້ວຍເຄື່ອງບັນທຶກ, ການເກັບຮັກສາ ຫຼື ຜະລິດຊ້ຳສຳເນົາຜົນງານເຫຼົ່ານັ້ນ ເຂົ້າໃນວັດຖຸທີ່ສາມາດຈັບບາຍໄດ້ ຫຼື ໄຟລເອເລັກໂຕຣນິກ;
3. ຜົນງານທີ່ສະແດງອອກທາງດ້ານວາຈາ, ການສະແດງສົດ ແລະ ການຖ່າຍທອດສົດ ທີ່ໄດ້ມີການບັນທຶກໄວ້;
4. ຜົນງານທີ່ຖືກສ້າງຂຶ້ນໃນຮູບແບບເອເລັກໂຕຣນິກທີ່ໄດ້ຖືກບັນທຶກໄວ້ ຫຼື ເກັບຮັກສາໃນວັດຖຸໃດໜຶ່ງ.

ຜົນງານທີ່ຍັງບໍ່ທັນສົມບູນ ຫຼື ອາດຈະມີການປັບປຸງຕາມພາຍຫຼັງ ໄດ້ຮັບການປົກປ້ອງເປັນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ນັບຕັ້ງແຕ່ເວລາທີ່ຖືກບັນທຶກເຂົ້າໃນວັດຖຸທີ່ສາມາດຈັບບາຍໄດ້, ເຖິງວ່າເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຈະປັບປຸງ ຫຼື ບໍ່ສືບຕໍ່ສ້າງສັນຜົນງານນັ້ນໃຫ້ສຳເລັດກໍຕາມ.

ຜົນງານສືບເນື່ອງຈາກລິຂະສິດ ຕ້ອງໄດ້ຮັບການປົກປ້ອງເປັນຜົນງານຕົ້ນສະບັບໃໝ່ ຊຶ່ງຕ້ອງໄດ້ຮັບອະນຸຍາດ ໂດຍມີ ຫຼື ບໍ່ມີ ເງື່ອນໄຂຈາກເຈົ້າຂອງລິຂະສິດຜົນງານຕົ້ນສະບັບເດີມ ທີ່ຖືກອ້າງອີງເຖິງໃນຜົນງານສືບເນື່ອງຈາກລິຂະສິດນັ້ນ.

### ມາດຕາ 6 ສິ່ງທີ່ບໍ່ສາມາດປົກປ້ອງເປັນລິຂະສິດ

ຂໍ້ມູນ ຫຼື ເອກະສານທີ່ກຳນົດໄວ້ໃນມາດຕາ 94 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງຢູ່ໃນຜົນງານໃດໜຶ່ງຈະບໍ່ໄດ້ຮັບການປົກປ້ອງລິຂະສິດ ແລະ ບໍ່ຈຳເປັນຕ້ອງຂໍອະນຸຍາດນຳໃຊ້ ຫຼື ບໍ່ຖືວ່າເປັນການລະເມີດລິຂະສິດ, ແຕ່ບໍ່ໃຫ້ສ້າງຜົນງານຄືກັນກັບຜົນງານໃດໜຶ່ງນັ້ນ. ສຳລັບການຜະລິດຊ້ຳການແປເອກະສານໃນຂໍ້ 3 ມາດຕາ 94 ທີ່ບໍ່ເປັນທາງການຂອງເອກະຊົນ ຕ້ອງໄດ້ຂໍອະນຸຍາດຈາກຜູ້ແປ.

## ໝວດທີ 2
## ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 7 ບຸກຄົນທີ່ສາມາດແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

ເຈົ້າຂອງລິຂະສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 99 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຈຳແນກສັນຊາດ, ສະຖານທີ່ຈັດພິມ ຫຼື ສະຖານທີ່ດຳເນີນທຸລະກິດ ໃນປະເທດທີ່ເປັນພາຄີຂອງສົນທິສັນຍາເບີນ ວ່າດ້ວຍການປົກປ້ອງຜົນງານທາງດ້ານສິລະປະກຳ ແລະ ວັນນະກຳ ສາມາດແຈ້ງຂໍ້ມູນລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ.

ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ, ຜູ້ກະຈາຍສຽງ-ແຜ່ພາບ ຫຼື ອົງການກະຈາຍສຽງ-ແຜ່ພາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 95 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຈຳແນກສັນຊາດ ຫຼື ສະຖານທີ່ດຳເນີນທຸລະກິດ ໃນປະເທດທີ່ເປັນພາຄີ ຂອງສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ ສາມາດແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

### ມາດຕາ 8 ສຳນວນຄຳຮ້ອງຂໍແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

ສຳນວນຄຳຮ້ອງຂໍແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ປະກອບມີເອກະສານ ດັ່ງນີ້:

1. ຄຳຮ້ອງຂໍແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບມອບສິດ ໃນກໍລະນີທີ່ຍື່ນຜ່ານຜູ້ຕາງໜ້າ;
3. ສຳເນົາ ຫຼື ຮູບຖ່າຍຂອງຜົນງານ, ການສະແດງ, ການບັນທຶກສຽງ-ພາບ ຫຼື ການກະຈາຍສຽງ-ແຜ່ພາບ ຈຳນວນ ສອງ ສະບັບ ຫຼື ໃນຟາຍເອເລັກໂຕຣນິກ;
4. ໃບຮັບເງິນຄ່າບໍລິການ.

ສຳນວນຄຳຮ້ອງຂໍແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໜຶ່ງສະບັບໃຊ້ໄດ້ສະເພາະແຕ່ຜົນງານດຽວເທົ່ານັ້ນ. ຄຳຮ້ອງຂໍແຈ້ງຂໍ້ມູນໜຶ່ງສະບັບ ສາມາດແຈ້ງຫຼາຍຜົນງານທີ່ຢູ່ໃນຊຸດດຽວກັນ ເຊັ່ນ: ການລວບລວມບົດກະວີ, ບົດຄວາມ ແລະ ອື່ນໆ.

ຄຳຮ້ອງຂໍແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງເປັນພາສາລາວທຸກເອກະສານທີ່ຄັດຕິດມາກັບຄຳຮ້ອງຂໍແຈ້ງຂໍ້ມູນ ກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ທີ່ເປັນພາສາຕ່າງປະເທດຕ້ອງແປເປັນພາສາລາວເທົ່ານັ້ນ ເປັນຕົ້ນ: ໃບມອບສິດ, ໃບໂອນສິດ,ໃບອະນຸຍາດນຳໃຊ້ ຫຼື ເອກະສານອື່ນໆທີ່ກ່ຽວຂ້ອງ.

### ມາດຕາ 9 ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

ຜູ້ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງຍື່ນຄຳຮ້ອງຂໍແຈ້ງຂໍມູນລິຂະສິດ ເຖິງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ.

ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງລຸ່ມນີ້:

1. ຮັບຄຳຮ້ອງກວດຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແບບຟອມຄຳຮ້ອງ, ໃຫ້ເລກທີ ແລະ ວັນທີຍື່ນຄຳຮ້ອງ ແລະ ອອກໃບຮັບເງິນຄ່າບໍລິການ. ໃນກໍລະນີສຳນວນຄຳຮ້ອງບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຕ້ອງແຈ້ງໃຫ້ຜູ້ແຈ້ງຂໍ້ມູນແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເອົາຄຳຮ້ອງໄປດັດແກ້ຄືນໃໝ່.
2. ສົ່ງສຳນວນຄຳຮ້ອງຂໍແຈ້ງຂໍ້ມູນແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດທີ່ຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ໃຫ້ກົມຊັບສິນທາງປັນຍາພາຍໃນ ຫ້າ ວັນລັດຖະການ ເພື່ອດຳເນີນການຕາມຂັ້ນຕອນຕໍ່ໄປ;
3. ໃນກໍລະນີ ຜູ້ຮ້ອງຂໍແຈ້ງຂໍ້ມູນແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຫາກມີຈຸດປະສົງຂໍຖອນຄຳຮ້ອງ ຈະບໍ່ມີການສົ່ງຄືນຄ່າບໍລິການທີ່ໄດ້ຈ່າຍໄປແລ້ວ.

ກໍລະນີ ຜູ້ທີ່ບໍ່ມີສະຖານທີ່ດຳເນີນທຸລະກິດ ຫຼື ພູມລຳເນົາຢູ່ ສປປ ລາວ ຕ້ອງແຕ່ງຕັ້ງຜູ້ຕາງໜ້າເພື່ອດຳເນີນການແທນຕົນ.

ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ບໍ່ແມ່ນການຈົດທະບຽນເພື່ອໃຫ້ໄດ້ຮັບສິດໃນການປົກປ້ອງ ຫຼື ເປັນການຮຽກຮ້ອງສິດຄວາມເປັນເຈົ້າຂອງ, ເນື່ອງຈາກສິດດັ່ງກ່າວ ແມ່ນເກີດຂຶ້ນທັນທີພາຍຫຼັງມີການປະດິດຄິດແຕ່ງຜົນງານນັ້ນ ແຕ່ສາມາດແຈ້ງຂໍ້ມູນລິຂະສິດ ເພື່ອເປັນຫຼັກຖານ ຫຼື ເປັນຂໍ້ມູນໂດຍສະເພາະມີການລະເມີດ ຫຼື ຂໍ້ຂັດແຍ່ງ.

ໃນກໍລະນີ ມີຂໍ້ຂັດແຍ່ງເກີດຂຶ້ນ ກ່ຽວກັບການເປັນເຈົ້າຂອງຜົນງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ສາມາດດຳເນີນການ ຮ້ອງຟ້ອງຢູ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຂໍ້ຂັດແຍ່ງດັ່ງກ່າວ.

**ມາດຕາ 10 ການອອກໃບຢັ້ງຢືນການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ກົມຊັບສິນທາງປັນຍາ ຕ້ອງອອກໃບຢັ້ງຢືນການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ຜູ້ແຈ້ງຂໍ້ມູນແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ບັນທຶກຂໍ້ມູນເຂົ້າໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ດຳເນີນການອອກໃບຢັ້ງຢືນ ແລະ ສົ່ງໃບຢັ້ງຢືນໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອສົ່ງໃຫ້ເຈົ້າຂອງຄຳຮ້ອງ ພາຍໃນ ສິບຫ້າ ວັນລັດຖະການ ນັບແຕ່ວັນຍື່ນຄຳຮ້ອງ.

## ໝວດທີ 3
## ການດຳເນີນການຫຼັງ ການແຈ້ງຂໍ້ມູນລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ

**ມາດຕາ 11 ການປ່ຽນແປງຫຼັງການແຈ້ງຂໍ້ມູນລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ**

ເຈົ້າຂອງລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ ສາມາດຍື່ນຄຳຮ້ອງ ເພື່ອປ່ຽນຂໍ້ມູນ ກ່ຽວກັບ ຊື່ ແລະ/ຫຼື ທີ່ຢູ່ ຂອງເຈົ້າຂອງລິຂະສິດ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ ເພື່ອບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ອອກໃບຢັ້ງຢືນການປ່ຽນແປງການແຈ້ງຂໍ້ມູນດັ່ງກ່າວ.

**ມາດຕາ 12 ການຂໍສຳເນົາໃບຢັ້ງຢືນການແຈ້ງຂໍ້ມູນລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ**

ເຈົ້າຂອງລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ ສາມາດຂໍສຳເນົາໃບຢັ້ງຢືນການແຈ້ງຂໍ້ມູນລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດໄດ້ເພື່ອໃຊ້ແທນສະບັບເດີມທີ່ເສຍຫາຍ ຫຼື ຊອກບໍ່ເຫັນ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ພ້ອມທັງຈ່າຍຄ່າບໍລິການ.

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ ບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ອອກໃບຢັ້ງຢືນສະບັບໃໝ່.

**ມາດຕາ 13 ການຍົກເລີກ ຫຼື ລຶບລ້າງ ການແຈ້ງຂໍ້ມູນລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ**

ໃນກໍລະນີການອອກໃບຢັ້ງຢືນຂໍ້ມູນລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ ອອກໃຫ້ແລ້ວນັ້ນເປັນຂໍ້ມູນທີ່ບໍ່ຖືກຕ້ອງ, ຂໍ້ມູນບິດເບືອນ ຫຼື ແອບອ້າງ ຄວາມເປັນເຈົ້າຂອງແທ້ຈິງຢູ່ໃນສຳນວນຄຳຮ້ອງ, ປິດບັງຂໍ້ມູນ ຫຼື ມີການກະທຳໃດໜຶ່ງທີ່ລະເມີດ ຫຼື ບໍ່ສອດຄ່ອງກັບນິຕິກຳ ແລະ ກົດໝາຍ ກົມຊັບສິນທາງປັນຍາ ຕ້ອງດຳເນີນຂັ້ນຕອນການຍົກເລີກ ຫຼື ລຶບລ້າງໃບຢັ້ງຢືນດັ່ງກ່າວ ພ້ອມທັງບັນທຶກການຍົກເລີກ ຫຼື ລຶບລ້າງ ລົງໃນຖານຂໍ້ມູນຂອງກົມ ແລະ ແຈ້ງໃຫ້ເຈົ້າຂອງຜົນງານຮັບຊາບ.

## ໝວດທີ 4
## ການໂອນສິດ ແລະ ການອະນຸຍາດນຳໃຊ້ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 14 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ

ເຈົ້າຂອງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ສາມາດໂອນສິດຂອງຕົນທັງໝົດ ຫຼື ບາງສ່ວນ ໃຫ້ແກ່ຜູ້ຮັບໂອນສິດ ດ້ວຍການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ ໂດຍທີ່ຜູ້ໂອນສິດ ແລະ ຜູ້ຮັບໂອນສິດ ສາມາດເຮັດໜັງສືເປັນລາຍລັກອັກສອນ ກ່ຽວກັບການໂອນສິດດັ່ງກ່າວ.

ໃນກໍລະນີ ມີການໂອນກຳມະສິດຂອງນິຕິບຸກຄົນ ສຳລັບສິດຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງໃຫ້ເປັນຕາມການກຳນົດໃນເອກະສານຂອງການໂອນກຳມະສິດດັ່ງກ່າວ. ໃນກໍລະນີບໍ່ໄດ້ຕົກລົງໄວ້ເປັນຢ່າງອື່ນ, ການໂອນກຳມະສິດຂອງນິຕິບຸກຄົນ ໃຫ້ຖືວ່າມີການລວມເອົາການໂອນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຂອງນິຕິບຸກຄົນດັ່ງກ່າວນັ້ນ.

ໃນກໍລະນີ ຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໃສ ກົມຊັບສິນທາງປັນຍາ ສາມາດແຈ້ງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອໃຫ້ບຸກຄົນທີ່ແຈ້ງການໂອນສິດນັ້ນ ຍື່ນຂໍ້ມູນ ຫຼື ເອກະສານເພີ່ມຕື່ມ.

ໃນກໍລະນີ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ທີ່ໄດ້ແຈ້ງຂໍ້ມູນໄວ້ແລ້ວ ຫາກມີການໂອນສິດ, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດ ສາມາດແຈ້ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ, ພ້ອມທັງສະໜອງເອກະສານ ກ່ຽວກັບການໂອນສິດດັ່ງກ່າວ ເພື່ອບັນທຶກເຂົ້າໃນຖານຂໍ້ມູນ.

### ມາດຕາ 15 ການອະນຸຍາດນຳໃຊ້ສິດ

ການຕົກລົງ ກ່ຽວກັບການອະນຸຍາດນຳໃຊ້ສິດ ສາມາດບັນທຶກການແຈ້ງຂໍ້ມູນໄດ້ ໂດຍປະຕິບັດຕາມຂັ້ນຕອນເຊັ່ນດຽວກັນກັບທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີ ມີການຖືສິດຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຮ່ວມກັນຫຼາຍຄົນ ການອະນຸຍາດນຳໃຊ້ສິດແບບຜູກຂາດແຕ່ພຽງຜູ້ດຽວ ຕ້ອງໄດ້ຮັບການເຫັນດີຈາກເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຮ່ວມທັງໝົດ, ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນຢູ່ໃນສັນຍາ. ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດໃດໜຶ່ງ ສາມາດອະນຸຍາດໃຫ້ນຳໃຊ້ສິດໂດຍບໍ່ຈຳກັດແຕ່ພຽງຜູ້ດຽວ.

ການຂາຍລາຍການໃດໜຶ່ງທີ່ປະກອບຢູ່ໃນຜົນງານການປະພັນ, ການສະແດງ, ການບັນທຶກສຽງ-ພາບ ຫຼື ການກະຈາຍສຽງ-ແຜ່ພາບ ຕ້ອງຖືວ່າ ເປັນການອະນຸຍາດໃຫ້ຜູ້ຊື້ ສາມາດຂາຍຕໍ່ໃຫ້ບຸກຄົນອື່ນ ເພື່ອຈຸດປະສົງນຳໃຊ້ທົ່ວໄປ, ແຕ່ບໍ່ເປັນການໃຫ້ສິດແກ່ຜູ້ຊື້ ເຮັດສຳເນົາ, ການຜະລິດຊ້ຳ ຫຼື ສະແຫວງຫາຜົນປະໂຫຍດຂອງຜົນງານ ການປະພັນ, ການສະແດງ, ການບັນທຶກສຽງ-ພາບ ຫຼື ການກະຈາຍສຽງ-ແຜ່ພາບ, ເວັ້ນເສຍແຕ່ເຈົ້າຂອງສິດໄດ້ຕົກລົງເປັນຢ່າງອື່ນທີ່ເປັນລາຍລັກອັກສອນ.

ການກຳນົດຢູ່ໃນວັກ 2 ຂອງມາດຕານີ້ ຈະປະຕິບັດເຊັ່ນດຽວກັນກັບ ການເຊົ່າ, ການເຊົ່າຊື້, ການໃຫ້ເປັນຂອງຂວັນ ຫຼື ດ້ວຍວິທີການອື່ນ ກ່ຽວກັບລາຍການໃດໜຶ່ງຂອງຜົນງານການປະພັນ, ການສະແດງ, ການບັນທຶກສຽງ-ພາບ ຫຼື ການກະຈາຍສຽງ-ແຜ່ພາບ. ໃນກໍລະນີ ການດຳເນີນການດັ່ງກ່າວຫາກມີການກຳນົດເວລາ ຫຼື ຂອບ

ເຂດການນຳໃຊ້, ການອະນຸຍາດນຳໃຊ້ນັ້ນ ຈະມີກຳນົດເວລາ ແລະ ຂອບເຂດການນຳໃຊ້ດຽວກັນ.

ໃນກໍລະນີ ການໂອນກຳມະສິດຂອງນິຕິບຸກຄົນ ຊຶ່ງເປັນຜູ້ໄດ້ຮັບການອະນຸຍາດນຳໃຊ້ໜຶ່ງ ຫຼື ຫຼາຍຜົນງານທີ່ມີລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ຕ້ອງຖືວ່າການອະນຸຍາດນຳໃຊ້ນັ້ນຖືກໂອນພ້ອມກັບການໂອນກຳມະສິດຂອງນິຕິບຸກຄົນດັ່ງກ່າວ, ເວັ້ນເສຍແຕ່ໄດ້ຕົກລົງເປັນຢ່າງອື່ນຢູ່ໃນສັນຍາການອະນຸຍາດນຳໃຊ້ ຫຼື ໃນເອກະສານ ກ່ຽວກັບການໂອນກຳມະສິດຂອງນິຕິບຸກຄົນນັ້ນ. ການໂອນກຳມະສິດຂອງນິຕິບຸກຄົນຈະບໍ່ມີຜົນຕໍ່ສັນຍາການອະນຸຍາດນຳໃຊ້ ຊຶ່ງນິຕິບຸກຄົນດັ່ງກ່າວ ເປັນຜູ້ມອບການອະນຸຍາດນຳໃຊ້, ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນສັນຍາການອະນຸຍາດນຳໃຊ້.

## ໝວດທີ 5
## ການຈຳກັດ ແລະ ການຍົກເວັ້ນສິດຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 16 ການຈຳກັດ ແລະ ການຍົກເວັ້ນ

ໃນມາດຕາ 115 ແລະ ມາດຕາ 116 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໄດ້ກຳນົດ ກ່ຽວກັບການຈຳກັດ ແລະ ການຍົກເວັ້ນສິດຂອງເຈົ້າຂອງ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ. ບຸກຄົນທີ່ມີເຈດຕະນາອ້າງອີງໃສ່ບົດບັນຍັດໃນສອງມາດຕາດັ່ງກ່າວ ຕ້ອງປະຕິບັດ ຕາມບົດບັນຍັດ ກ່ຽວກັບການຍົກເວັ້ນແຕ່ລະຂໍ້ຢ່າງເຂັ້ມງວດ. ການຍົກເວັ້ນເຫຼົ່ານີ້ ໃຫ້ຖືເປັນກໍລະນີພິເສດ ແລະ ບໍ່ຖືເປັນຫຼັກການທົ່ວໄປ ທີ່ອະນຸຍາດໃຫ້ມີການນຳໃຊ້ ເພື່ອສະແຫວງຫາຜົນປະໂຫຍດຂອງຜົນງານລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ.

ການອ້າງອີງຜົນງານທີ່ກຳນົດໄວ້ໃນຂໍ້ທີ 1 ແລະ 2 ຂອງວັກທີ 1 ແລະ ວັກທີ 3 ຂອງມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສາມາດເຮັດໄດ້ພຽງແຕ່ໃນກໍລະນີທີ່ການຜະລິດຊ້ຳ, ການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານຜົນງານເຫຼົ່ານັ້ນ ໂດຍທີ່ຜູ້ນຳໃຊ້ບໍ່ມີສິດສະຫງວນການອ້າງອີງດັ່ງກ່າວເປັນຂອງຕົນໄດ້ ແລະ ຕ້ອງປະຕິບັດຕາມບົດບັນຍັດຂອງມາດຕານີ້.

ການອ້າງອີງຜົນງານສາມາດດຳເນີນການໄດ້ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງຜົນງານ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ ໃນກໍລະນີ ການສະເໜີທີ່ຈະນຳໃຊ້ນັ້ນສອດຄ່ອງກັບທຸກເງື່ອນໄຂ ດັ່ງນີ້:

1. ຜົນງານທີ່ຖືກອ້າງອີງນັ້ນ ໄດ້ຖືກເປີດເຜີຍສູ່ສາທາລະນະຊົນ ຢ່າງຖືກຕ້ອງຕາມກົດໝາຍ;

2. ການອ້າງອີງຜົນງານ ບໍ່ໄດ້ສຳເນົາເອົາເນື້ອໃນເກີນຂອບເຂດຂອງການອ້າງອີງນັ້ນ, ໂດຍສະເພາະບົດບັນຍັດນີ້ ແມ່ນນຳໃຊ້ສຳລັບການອ້າງອີງຈາກບົດຄວາມໃນໜັງສືພິມ ແລະ ວາລະສານຕ່າງໆຢູ່ໃນຮູບແບບການສະຫຼຸບຂ່າວ;

3. ການອ້າງອີງຜົນງານ ໄດ້ມີການລະບຸຊື່ນັກປະພັນ ຫຼື ຜູ້ຖືສິດຢ່າງຖືກຕ້ອງ, ລວມທັງແຫຼ່ງທີ່ມາ ແລະ ຊື່ຂອງນັກປະພັນຖ້າມີຢູ່ໃນຜົນງານ;

4. ການນຳໃຊ້ທີ່ຖືວ່າສອດຄ່ອງຕາມການນຳໃຊ້ທີ່ເໝາະສົມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້, ໂດຍສະເພາະ ບໍ່ໃຫ້ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ແລະ ບໍ່ສ້າງຜົນເສຍຫາຍຕໍ່ຜົນປະໂຫຍດອັນຊອບທຳຂອງນັກປະພັນ.

ຜົນງານໃດໜຶ່ງ ອາດຖືກນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ບໍ່ຈ່າຍຄ່າຕອບແທນ, ຖ້າການນຳໃຊ້ທີ່ເໝາະສົມທີ່ໄດ້ສະເໜີມານັ້ນ ຫາກສອດຄ່ອງຕາມທຸກເງື່ອນໄຂ ດັ່ງນີ້:

1. ການນຳໃຊ້ຜົນງານທີ່ໄດ້ກ່າວມານັ້ນ ອະນຸຍາດໃຫ້ສະເພາະແຕ່ຈຸດປະສົງຂອງການສິດສອນເທົ່ານັ້ນ, ໝາຍຄວາມວ່າ ນຳໃຊ້ເນື້ອໃນຂອງເອກະສານໂດຍກົງເພື່ອຈຸດປະສົງຂອງການສິດສອນ, ແຕ່ບໍ່ໃຫ້ຜະລິດຊ້ຳ ເອກະສານດັ່ງກ່າວ ເພື່ອພິມຈຳໜ່າຍ ຫຼື ແຈກຢາຍໃນທາງການຄ້າ;

2. ການນຳໃຊ້ຜົນງານທີ່ໄດ້ກ່າວມານັ້ນ ແມ່ນອະນຸຍາດສະເພາະແຕ່ກໍລະນີທີ່ສາມາດຢັ້ງຢືນຈຸດປະສົງຂອງການນຳໃຊ້ເທົ່ານັ້ນ. ຂໍ້ຍົກເວັ້ນດັ່ງກ່າວ ນຳໃຊ້ສະເພາະແຕ່ການຜະລິດຊ້ຳຜົນງານດ້ານວັນນະກຳ ແລະ ຮູບພາບຂອງຜົນງານດ້ານວິຈິດສິນ ເພື່ອຈຸດປະສົງຂອງການສາທິດໂດຍຜ່ານສື່ສິ່ງພິມ ແລະ ການນຳໃຊ້ການກະຈາຍສຽງ-ແຜ່ພາບ ຫຼື ການບັນທຶກສຽງ ຫຼື ສຽງ ແລະ ພາບ ເພື່ອຈຸດປະສົງຂອງການສິດສອນ  ເຊັ່ນ: ການສາຍພາບ-ສຽງ ເພື່ອສາທິດເນື້ອໃນຂອງການສິດສອນ ຢູ່ໃນຫ້ອງຮຽນເທົ່ານັ້ນ ໂດຍບໍ່ແມ່ນການສະແດງ ຫຼື ການຜະລິດຊ້ຳສຳເນົາການບັນທຶກພາບ-ສຽງ ສຳລັບສາທາລະນະຊົນທົ່ວໄປ;

3. ເນື້ອໃນຜົນງານທີ່ນຳໃຊ້ ມີການອ້າງເຖິງນັກປະພັນ ຫຼື ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ລວມທັງແຫຼ່ງທີ່ມາ ແລະ ຊື່ຂອງນັກປະພັນຖ້າມີຢູ່ໃນຜົນງານນັ້ນ;

4. ການນຳໃຊ້ທີ່ຖືວ່າສອດຄ່ອງກັບການນຳໃຊ້ທີ່ເໝາະສົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້, ໂດຍສະເພາະບໍ່ໃຫ້ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ແລະ ບໍ່ສ້າງຜົນເສຍຫາຍຕໍ່ຜົນປະໂຫຍດອັນຊອບທຳຂອງນັກປະພັນ.

ການຜະລິດຊ້ຳຮູບພາບຂອງຜົນງານດ້ານວິຈິດສິນ, ພາບຖ່າຍ ແລະ ຜົນງານດ້ານສິລະປະອື່ນໆ ແລະ ຜົນງານດ້ານສິລະປະນຳໃຊ້ ໂດຍການຖ່າຍຮູບ ຫຼື ການຖ່າຍຮູບເງົາ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງສິດ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ, ຖ້າຫາກການຜະລິດຊ້ຳທີ່ສະເໜີມານັ້ນ ສອດຄ່ອງກັບທຸກເງື່ອນໄຂ ດັ່ງນີ້:

1. ຜົນງານທີ່ຈະຜະລິດຊ້ຳ ໄດ້ຖືກເຜີຍແຜ່, ນຳສະເໜີ ຫຼື ສື່ສານສູ່ ສາທາລະນະຊົນແລ້ວ;

2. ການຜະລິດຊ້ຳດັ່ງກ່າວ ເປັນພຽງສ່ວນໜ້ອຍຂອງຜົນງານຮູບຖ່າຍ ຫຼື ຮູບເງົາ ແລະ ບໍ່ແມ່ນອົງປະກອບຕົ້ນຕໍຂອງຜົນງານຮູບຖ່າຍ ຫຼື ຮູບເງົາ;

3. ການຜະລິດຊ້ຳ ຕ້ອງບໍ່ຂັດກັບການສະແຫວງຜົນປະໂຫຍດປົກກະຕິຂອງຜົນງານ ແລະ ຕ້ອງບໍ່ສ້າງຜົນເສຍຫາຍຢ່າງບໍ່ເໝາະສົມຕໍ່ຜົນປະໂຫຍດອັນຊອບທຳຂອງຜູ້ຖືສິດ.

ການຜະລິດຊ້ຳໂດຍສື່ມວນຊົນ ແລະ ການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານອື່ນຕໍ່ສາທາລະນະຊົນສາມາດເຮັດໄດ້ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກນັກປະພັນ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ, ຖ້າການກະທຳນັ້ນຫາກສອດຄ່ອງກັບທຸກເງື່ອນໄຂ ດັ່ງນີ້:

1. ການຜະລິດຊ້ຳ ຫຼື ການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານອື່ນ ກ່ຽວຂ້ອງກັບບົດຄວາມທີ່ໄດ້ລົງໃນໜັງສືພິມ ຫຼື ວາລະສານ;

2. ຫົວຂໍ້ທີ່ຈະຖືກນຳມາຜະລິດຊ້ຳ ຫຼື ກະຈາຍສຽງ-ແຜ່ພາບ ກ່ຽວຂ້ອງກັບບັນຫາທາງດ້ານເສດຖະກິດ, ດ້ານການເມືອງ ຫຼື ສາດສະໜາ ໃນໄລຍະປະຈຸບັນ;

3. ແຫຼ່ງທີ່ມາຂອງເນື້ອໃນຜົນງານທີ່ຈະຜະລິດຊ້ຳ ໄດ້ມີການລະບຸຢ່າງຈະແຈ້ງ;

4. ການຜະລິດຊ້ຳ ຕ້ອງບໍ່ຂັດກັບການສະແຫວງຜົນປະໂຫຍດປົກກະຕິຂອງຜົນງານ ແລະ ຕ້ອງບໍ່ສ້າງຜົນເສຍຫາຍຢ່າງບໍ່ເໝາະສົມຕໍ່ຜົນປະໂຫຍດອັນຊອບທຳຂອງຜູ້ຖືສິດ.

ຜົນງານກ່ຽວກັບລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ສາມາດຜະລິດຊໍ້າ ແລະ ເຜີຍແຜ່ຕໍ່ສາທາລະນະຊົນ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງສິດ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ, ຖ້າຫາກການກະທຳນັ້ນສອດຄ່ອງກັບທຸກເງື່ອນໄຂ ດັ່ງນີ້:

1. ເພື່ອລາຍງານເຫດການປະຈຸບັນດ້ວຍ ການຖ່າຍພາບ, ການຖ່າຍຮູບເງົາ, ການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານຕໍ່ສາທາລະນະຊົນ ດ້ວຍລະບົບສື່ສານທີ່ໃຊ້ສາຍ;

2. ກ່ຽວຂ້ອງກັບຜົນງານດ້ານ ສິລະປະກຳ ຫຼື ວັນນະກຳທີ່ໄດ້ເຫັນ ແລະ ໄດ້ຍິນໃນເຫດການທີ່ກຳລັງເກີດຂຶ້ນ;

3. ການຜະລິດຊໍ້າ ຫຼື ການສື່ສານຕໍ່ສາທາລະນະຊົນຂອງຜົນງານ ເພື່ອຈຸດປະສົງໃນການສະໜອງຂໍ້ມູນເທົ່ານັ້ນ;

4. ການຜະລິດຊໍ້າ ຫຼື ການສື່ສານດັ່ງກ່າວ ບໍ່ໃຫ້ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ແລະ ບໍ່ສ້າງຜົນເສຍຫາຍ ຕໍ່ຜົນປະໂຫຍດອັນຊອບທຳຂອງເຈົ້າຂອງສິດ.

**ມາດຕາ 17 ການອະນຸຍາດຈາກເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ສາມາດອະນຸຍາດໃຫ້ມີການສຳເນົາ, ການຜະລິດຊໍ້າ ຫຼື ການສະແຫວງຫາຜົນປະໂຫຍດອື່ນ ໃນລັກສະນະໃດກໍໄດ້ ແລະ ຕ້ອງສອດຄ່ອງກັບເງື່ອນໄຂຂອງສັນຍາທີ່ຄູ່ສັນຍາໄດ້ຕົກລົງກັນ. ການອະນຸຍາດ ສາມາດເຮັດແບບສະເພາະເຈາະຈົງ, ມີຂອບເຂດ ໃນການສະແຫວງຫາຜົນປະໂຫຍດຈາກຜົນງານຂອງຕົນ ຫຼື ກຳນົດຮູບແບບ ແລະ ເງື່ອນໄຂຂອງການອະນຸຍາດນັ້ນໃຫ້ແທດເໝາະກັບສະພາບການນຳໃຊ້ຕົວຈິງໃນສັນຍາ.

ໃນກໍລະນີ ມີຂໍ້ຂັດແຍ່ງເກີດຂຶ້ນ ກ່ຽວກັບການລະເມີດສັນຍາ, ຝ່າຍທີ່ອ້າງວ່າໄດ້ຮັບອະນຸຍາດໃຫ້ສະແຫວງຫາຜົນປະໂຫຍດ ຕ້ອງຮັບຜິດຊອບໃນການນຳເອົາຫຼັກຖານ ກ່ຽວກັບການອະນຸຍາດດັ່ງກ່າວນັ້ນມາຢັ້ງຢືນ, ແຕ່ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງຮັບຜິດຊອບໃນການປະກອບຫຼັກຖານ ເພື່ອປະຕິເສດການອະນຸຍາດດັ່ງກ່າວ.

ໃນກໍລະນີ ມີຂໍ້ຂັດແຍ່ງທີ່ເກີດຂຶ້ນ ຊຶ່ງການອະນຸຍາດເປັນລາຍລັກອັກສອນໃນສັນຍາບໍ່ໄດ້ກຳນົດຢ່າງລະອຽດ ລະຫວ່າງຄູ່ຮ່ວມສັນຍາ, ການອະນຸຍາດຕໍ່ໄປນີ້ອາດຈະເປັນໄປໄດ້, ເວັ້ນເສຍແຕ່ໄດ້ຕົກລົງໄວ້ເປັນຢ່າງອື່ນ:

1. ການອະນຸຍາດທັງໝົດ ໃຫ້ຖືວ່າ ເປັນການອະນຸຍາດສະເພາະແຕ່ການສະແຫວງຫາຜົນປະໂຫຍດຢູ່ໃນຂອບເຂດທີ່ລະບຸໄວ້ໃນສັນຍາເທົ່ານັ້ນ, ຖ້າຫາກມີການສະແຫວງຫາຜົນປະໂຫຍດເພີ່ມຕື່ມ ຕ້ອງໄດ້ຂໍອະນຸຍາດເພີ່ມ;

2. ການອະນຸຍາດທັງໝົດໃຫ້ຖືວ່າບຸກຄົນທີ່ໄດ້ຮັບອະນຸຍາດ ບໍ່ມີສິດອະນຸຍາດໃຫ້ບຸກຄົນອື່ນສະແຫວງຫາຜົນປະໂຫຍດຈາກການອະນຸຍາດດັ່ງກ່າວນັ້ນ;

3. ການກະທຳໃດໜຶ່ງທີ່ໄດ້ຮັບອະນຸຍາດຊຶ່ງບໍ່ແມ່ນໃນທາງການຄ້າ ຈະຖືວ່າບຸກຄົນທີ່ໄດ້ຮັບອະນຸຍາດບໍ່ມີພັນທະຕ້ອງຈ່າຍຄ່າຕອບແທນໃຫ້ແກ່ຜູ້ໃຫ້ອະນຸຍາດ, ເວັ້ນເສຍແຕ່ການກະທຳດັ່ງກ່າວ ກໍ່ໃຫ້ເກີດລາຍໄດ້ ຫຼື ຜົນປະໂຫຍດທາງດ້ານເສດຖະກິດ, ຕ້ອງມີການຈ່າຍຄ່າລິຂະສິດຢ່າງເໝາະສົມ ເຖິງຈະບໍ່ມີການຕົກລົງເງື່ອນໄຂການຈ່າຍຄ່າຕອບແທນໃນສັນຍາກໍຕາມ;

4. ໃນກໍລະນີ ເປັນການອະນຸຍາດບາງຄັ້ງຄາວ ທີ່ບໍ່ມີລັກສະນະທາງການຄ້າ ຊຶ່ງການນໍາໃຊ້ສິດນັ້ນບໍ່ໄດ້ສ້າງລາຍຮັບ ຫຼື ບໍ່ນໍາໃຊ້ເຂົ້າໃນກິດຈະກໍາທີ່ສ້າງຜົນກໍາໄລ, ອາດມີການອະນຸຍາດດ້ວຍປາກເປົ່າ ຫຼື ດ້ວຍຮູບແບບໃດໜຶ່ງ ຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

5. ໃນກໍລະນີ ບໍ່ມີຫຼັກຖານສະແດງເຖິງການອະນຸຍາດທີ່ເປັນລາຍລັກອັກສອນ, ການກະທໍາໃດໜຶ່ງໃນທາງການຄ້າທີ່ສ້າງລາຍຮັບ, ໃຫ້ຖືວ່າ ບໍ່ໄດ້ຮັບອະນຸຍາດ ແລະ ຕ້ອງຈ່າຍຄ່າຕອບແທນຢ່າງເໝາະສົມ.

**ມາດຕາ 18 ການນໍາໃຊ້ທີ່ເໝາະສົມ**

ການນໍາໃຊ້ທີ່ເໝາະສົມ ແມ່ນໄດ້ກໍານົດໄວ້ໃນມາດຕາ 115 ແລະ 116 ຊຶ່ງບົດບັນຍັດດັ່ງກ່າວ ມີການກໍານົດຂໍ້ຍົກເວັ້ນຫຼາຍຢ່າງຈາກຫຼັກການລວມ ຊຶ່ງບໍ່ແມ່ນການອະນຸຍາດແບບບໍ່ມີຂອບເຂດໃນການສໍາເນົາ, ການຜະລິດຊໍ້າ ຫຼື ໃຊ້ປະໂຫຍດຈາກຜົນງານ, ການສະແດງ, ການບັນທຶກສຽງ-ພາບ ແລະ ການກະຈາຍສຽງ-ແຜ່ພາບ; ຊຶ່ງການສໍາເນົາ ຫຼື ການຜະລິດຊໍ້າທັງໝົດ ຫຼື ການນໍາໃຊ້ເພື່ອສະແຫວງຫາຜົນປະໂຫຍດອື່ນ ຕ້ອງມີການອະນຸຍາດຈາກເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

ການນໍາໃຊ້ທີ່ເໝາະສົມ ແມ່ນກໍານົດບົນພື້ນຖານຂໍ້ມູນຄວາມຈິງ ໂດຍພິຈາລະນາທຸກບັນຫາທີ່ກ່ຽວຂ້ອງ ດັ່ງນີ້:

1. ຈຸດປະສົງ ແລະ ລັກສະນະຂອງການນໍາໃຊ້ ໂດຍພິຈາລະນາວ່າ ການນໍາໃຊ້ດັ່ງກ່າວນັ້ນ ແມ່ນເພື່ອຈຸດປະສົງທາງດ້ານທຸລະກິດ ຫຼື ການສຶກສາທີ່ບໍ່ຫວັງຜົນກໍາໄລ ຫຼື ບໍ່;

2. ການນໍາໃຊ້ເນື້ອໃນຜົນງານ ໄດ້ມີການລະບຸ ແລະ ບົ່ງບອກເຖິງເຈົ້າຂອງລິຂະສິດ ຫຼື ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດອື່ນ ຫຼື ບໍ່;

3. ລັກສະນະຂອງຜົນງານທີ່ມີລິຂະສິດ ຫຼື ການສະແດງ, ການບັນທຶກສຽງ ຫຼື ການກະຈາຍສຽງ-ແຜ່ພາບ ທີ່ໄດ້ຮັບການປົກປ້ອງ ລວມທັງ ຜົນງານທີ່ໄດ້ເຜີຍແຜ່ແລ້ວ ຫຼື ຍັງບໍ່ທັນໄດ້ເຜີຍແຜ່;

4. ຈໍານວນ ແລະ ສັດສ່ວນເນື້ອໃນທີ່ຖືກນໍາໃຊ້ ທຽບກັບຜົນງານທີ່ມີລິຂະສິດທັງໝົດ;

5. ຜົນກະທົບຈາກການນໍາໃຊ້ທີ່ມີຕໍ່ທ່າແຮງຂອງຕະຫຼາດ ຫຼື ມູນຄ່າຂອງຜົນງານທີ່ມີລິຂະສິດ.

ການນໍາໃຊ້ທີ່ເໝາະສົມ ແມ່ນອະນຸຍາດສະເພາະແຕ່ກໍລະນີພິເສດທີ່ບໍ່ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ຫຼື ບໍ່ລະເມີດສິດ ແລະ ຜົນປະໂຫຍດອັນຊອບທໍາຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດໂດຍບໍ່ສົມເຫດສົມຜົນ. ໃນການພິຈາລະນາການນໍາໃຊ້ທີ່ເໝາະສົມ ຍັງຕ້ອງຄໍານຶງເຖິງບັນຫາທັງໝົດເຖິງວ່າໃນບາງເຫດການ ອາດຈະຢູ່ໃນໜຶ່ງ ຫຼື ຫຼາຍປັດໃຈ ດັ່ງນີ້:

1. ການຜະລິດຊໍ້າ ແລະ ການເຜີຍແຜ່ພຽງແຕ່ສ່ວນໜ້ອຍໜຶ່ງຂອງຜົນງານ ໄດ້ສ້າງຜົນເສຍຫາຍຕໍ່ຕະຫຼາດສໍາລັບຜົນງານນັ້ນ, ຊຶ່ງການຜະລິດຊໍ້າ ແລະ ການເຜີຍແຜ່ດັ່ງກ່າວ ບໍ່ຖືວ່າເປັນການນໍາໃຊ້ທີ່ເໝາະສົມ;

2. ການອ້າງຜົນງານຂອງຜູ້ອື່ນໂດຍບໍ່ບອກແຫຼ່ງທີ່ມາ ຖືວ່າບໍ່ເປັນການນໍາໃຊ້ທີ່ເໝາະສົມ ເນື່ອງຈາກວ່າມີການລະເມີດສິດດ້ານຈາລິຍະທໍາຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ. ເຖິງຢ່າງໃດກໍຕາມ, ໃຫ້ເບິ່ງເພີ່ມຕື່ມໃນຂໍ້ 3 ຂອງວັກນີ້;

3. ບາງຜົນງານໄດ້ເຮັດຂຶ້ນເພື່ອຈຸດປະສົງສະເພາະໃນການເຮັດສໍາເນົາ, ການຜະລິດຊໍ້າທັງໝົດ ຫຼື ບາງສ່ວນຂອງຜົນງານ, ຕາມປົກກະຕິແລ້ວການນໍາໃຊ້ທີ່ເໝາະສົມ ແມ່ນຈໍາກັດສໍາລັບຈຸດປະສົງດັ່ງກ່າວນັ້ນ ແຕ່ບໍ່ຈໍາເປັນຕ້ອງອ້າງເຖິງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດສະເໝີໄປຖ້າການນໍາໃຊ້ນັ້ນຫາກຢູ່ໃນຂອບເຂດຂໍ້ຈໍາກັດທີ່ເຈົ້າຂອງສິດໄດ້ກໍານົດໄວ້ ແລະ ຍັງສອດຄ່ອງກັບການນໍາໃຊ້ທີ່ເໝາະສົມ;

4. ໃນກໍລະນີ ຜົນງານຍັງບໍ່ໄດ້ຖືກເຜີຍແຜ່ ແມ່ນບໍ່ເປັນບັນຫາໃນການພິຈາລະນາການນຳໃຊ້ທີ່ເໝາະສົມໂດຍອີງໃສ່ການພິຈາລະນາບັນຫາທັງໝົດຂ້າງເທິງ, ແຕ່ຕ້ອງຄຳນຶງເຖິງສິດທາງດ້ານຈາລິຍະທຳຂອງຜູ້ປະດິດຄິດແຕ່ງ ທີ່ຈະເປີດເຜີຍຄັ້ງທຳອິດຕໍ່ສາທາລະນະຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 101 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 19 ການກະທຳທີ່ບໍ່ແມ່ນການນຳໃຊ້ທີ່ເໝາະສົມ**

ອີງຕາມມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ເຖິງວ່າຈະມີການວິເຄາະການນຳໃຊ້ທີ່ເໝາະສົມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້ກໍຕາມ, ການກະທຳທີ່ບໍ່ຖືວ່າເປັນການນຳໃຊ້ທີ່ເໝາະສົມມີ ດັ່ງນີ້:

1. ການຜະລິດຊໍ້າດ້ວຍການສຳເນົາຜົນງານດ້ານສະຖາປັດຕະຍະກຳ, ລວມທັງການຜະລິດຊໍ້າດ້ວຍການສ້າງຜົນງານດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດ;

2. ການຜະລິດຊໍ້າ ຫຼື ການສະແຫວງຫາຜົນປະໂຫຍດອື່ນໆ ດ້ວຍການຫຼົບຫຼີກຈາກມາດຕະການທາງດ້ານເຕັກໂນໂລຊີ ທີ່ນຳໃຊ້ເພື່ອປົກປ້ອງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ໂດຍບໍ່ໄດ້ຮັບອະນຸຍາດ;

3. ການຜະລິດຊໍ້າ ຫຼື ການສະແຫວງຫາຜົນປະໂຫຍດອື່ນໆ ດ້ວຍການຖອນ ຫຼື ດັດແປງຂໍ້ມູນເອເລັກໂຕຣນິກ ກ່ຽວກັບການຄຸ້ມຄອງສິດ ໂດຍບໍ່ໄດ້ຮັບອະນຸຍາດ;

4. ການນຳໃຊ້ຜົນງານລວມທັງ ການນຳໃຊ້ທີ່ຖືກຍົກເວັ້ນ ຕາມທີ່ໄດ້ກຳນົດສະເພາະໃນມາດຕາ 115 ແລະ 116 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງການນຳໃຊ້ດັ່ງກ່າວ ຫາກຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ຫຼື ສ້າງຜົນເສຍຫາຍຢ່າງບໍ່ເໝາະສົມຕໍ່ຜົນປະໂຫຍດອັນຊອບທຳຂອງເຈົ້າຂອງສິດ ຖືວ່າເປັນການກະທຳທີ່ບໍ່ເປັນການນຳໃຊ້ທີ່ເໝາະສົມ.

**ມາດຕາ 20 ການນຳໃຊ້ທີ່ເໝາະສົມ ແລະ ການເຂົ້າເຖິງຜົນງານສຳລັບຜູ້ພິການທາງສາຍຕາ**

ໃນມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໄດ້ກຳນົດ ກ່ຽວກັບການເຂົ້າເຖິງຜົນງານສຳລັບບຸກຄົນທີ່ພິການທາງສາຍຕາ ໂດຍໄດ້ກຳນົດຂໍ້ຍົກເວັ້ນພິເສດ ທີ່ອະນຸຍາດໃຫ້ມີການແປຜົນງານດັ່ງກ່າວເປັນຕົວໜັງສືນູນ ຫຼື ຕົວໜັງສືອື່ນໆສຳລັບບຸກຄົນພິການທາງສາຍຕາ. ການແປຕົວໜັງສືນູນ ຫຼື ຕົວໜັງສືອື່ນໆດັ່ງກ່າວນັ້ນ, ຖືວ່າເປັນຜົນງານທີ່ສືບເນື່ອງຂອງຜົນງານເດີມ. ໃນມາດຕາ 115 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ອະນຸຍາດໃຫ້ມີການແປດັ່ງກ່າວ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງສິດ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ, ການນຳໃຊ້ການແປດັ່ງກ່າວ ຕ້ອງບໍ່ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ຫຼື ບໍ່ສ້າງຜົນເສຍຫາຍຕໍ່ຜົນປະໂຫຍດອັນຊອບທຳຂອງເຈົ້າຂອງສິດ. ຂໍ້ຍົກເວັ້ນດັ່ງກ່າວນຳໃຊ້ສະເພາະການແປສະບັບຕົ້ນເປັນຕົວໜັງສືນູນ ຫຼື ຕົວໜັງສືອື່ນໆສຳລັບຜູ້ພິການທາງສາຍຕາ ຊຶ່ງບໍ່ກວມເອົາການຍົກເວັ້ນການສຳເນົາການແປດັ່ງກ່າວ ທີ່ໄດ້ມີການແປຜ່ານມາແລ້ວທີ່ບໍ່ໄດ້ຮັບອະນຸຍາດ.

**ມາດຕາ 21 ຜົນງານດ້ານວັນນະກຳທີ່ໄດ້ຢຸດຕິການຈັດພິມ**

ການນຳໃຊ້ຜົນງານທີ່ ໄດ້ຢຸດຕິການຈັດພິມ ຫຼື ບໍ່ມີຢູ່ໃນ ສປປ ລາວ ໃຫ້ປະຕິບັດດັ່ງນີ້:

1. ຕ້ອງພິຈາລະນາວ່າ ຜົນງານດັ່ງກ່າວມີລິຂະສິດ ຢູ່ ຫຼື ບໍ່ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;

2. ຖ້າຫາກວ່າຜົນງານຍັງໄດ້ຮັບການປົກປ້ອງຢູ່ ໃຫ້ພິຈາລະນາວ່າຜົນງານທີ່ສະເໜີຂໍນຳໃຊ້ນັ້ນ ຕ້ອງມີການຂໍອະນຸຍາດ ຫຼື ບໍ່;

3. ການອ້າງອີງຜົນງານທີ່ຢຸດຕິການຈັດພິມ ສາມາດເຮັດໄດ້ໂດຍອີງໃສ່ເງື່ອນໄຂເຊັ່ນດຽວກັນກັບການຂໍອະນຸຍາດນຳໃຊ້ຜົນງານອື່ນ, ເປັນຕົ້ນ ການຂໍອະນຸຍາດຈາກເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຫຼື ຕາມການຍົກເວັ້ນທີ່ໄດ້ກຳນົດໄວ້ໃນມາດຕາ 115 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ລວມທັງຫຼັກການຂອງການນຳໃຊ້ທີ່ເໝາະສົມ (ຖ້າມີ);

4. ຖ້າຫາກຜູ້ຈັດພິມວາງແຜນຈະພິມເຜີຍແຜ່ສຳເນົາເພີ່ມຕື່ມ ຫຼື ພິມຄັ້ງໃໝ່, ການອ້າງອີງໃສ່ຫຼັກການນຳໃຊ້ທີ່ເໝາະສົມແມ່ນບໍ່ສາມາດເຮັດໄດ້ ຍ້ອນວ່າການຜະລິດຊ້ຳສຳເນົາດັ່ງກ່າວນັ້ນ ອາດຈະສ້າງຜົນກະທົບຕໍ່ການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ.

ສຳລັບຈຸດປະສົງຂອງການນຳໃຊ້ ເພື່ອສະແຫວງຫາຜົນປະໂຫຍດທີ່ຈະເຮັດໃນລັກສະນະ ຫຼື ຮູບແບບ ທີ່ບໍ່ສອດຄ່ອງກັບຂໍ້ຍົກເວັ້ນໃດໜຶ່ງທີ່ບໍ່ຈຳເປັນຕ້ອງມີການຂໍອະນຸຍາດ ແມ່ນຈຳເປັນຕ້ອງຂໍອະນຸຍາດຈາກເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

ການຂໍອະນຸຍາດສຳລັບຜົນງານທີ່ໄດ້ຢຸດຕິການຈັດພິມ ອາດຈະເຮັດໄດ້ໃນລັກສະນະດຽວກັນກັບຜົນງານທີ່ມີການຈັດພິມ. ຫຼາຍສຳນັກພິມ ມີສ່ວນຮ່ວມໃນການຮ່າງໃບອະນຸຍາດນຳໃຊ້ ເພື່ອອຳນວຍຄວາມສະດວກໃນການຂໍ ແລະ ອະນຸມັດ ຫຼື ປະຕິເສດ ການໃຫ້ອະນຸຍາດ ຕາມເງື່ອນໄຂທີ່ກຳນົດໂດຍເຈົ້າຂອງສິດ. ບາງລາຍການ ຈຳເປັນຕ້ອງໄດ້ມີການອະນຸຍາດຜະລິດຊ້ຳ ເຖິງວ່າຈຳນວນທີ່ຈະສຳເນົາເປັນພຽງບາງສ່ວນຂອງບົດຄວາມທັງໝົດ ເຊັ່ນ: ເສັ້ນສະແດງ, ຕາຕະລາງ, ຮູບພາບ, ກາບກອນ ແລະ ອື່ນໆ ທີ່ປະກອບເປັນສ່ວນໜຶ່ງຂອງຜົນງານທັງໝົດ. ໂດຍທົ່ວໄປ, ຈະອະນຸຍາດບົນພື້ນຖານບຸກຄົນທີ່ຈະສຳເນົາຕ້ອງປະຕິບັດຕາມເງື່ອນໄຂໃນການອ້າງອີງແຫຼ່ງຂໍ້ມູນຢ່າງຖືກຕ້ອງ.

ການໃຫ້ ຫຼື ປະຕິເສດການອະນຸຍາດ ສຳລັບຜົນງານທີ່ຢຸດພິມຈຳໜ່າຍ ມີຜົນທາງດ້ານກົດໝາຍຄືກັນກັບການອະນຸຍາດທີ່ໄດ້ໃຫ້ ຫຼື ປະຕິເສດສຳລັບຜົນງານທີ່ຍັງມີການພິມຈຳໜ່າຍຢູ່. ໃນກໍລະນີໄດ້ຮັບອະນຸຍາດ ການຜະລິດຊ້ຳ ຫຼື ການນຳໃຊ້ອື່ນໆ ຄວນໄດ້ຮັບການປະຕິບັດໃຫ້ສອດຄ່ອງກັບເງື່ອນໄຂຂອງການອະນຸຍາດ.

ບຸກຄົນທີ່ມີຈຸດປະສົງຢາກຜະລິດຊ້ຳຜົນງານທີ່ຢຸດຕິການຈັດພິມ ຕ້ອງຂໍອະນຸຍາດເສຍກ່ອນ. ຖ້າວ່າມີເຫດຜົນພຽງພໍ ແລະ ມີຄວາມຈຳເປັນທີ່ຈະຜະລິດຊ້ຳຜົນງານທັງໝົດ ແຕ່ບໍ່ສາມາດຊອກຫາເຈົ້າຂອງສິດໄດ້, ຜົນງານດັ່ງກ່າວນັ້ນໄດ້ຢຸດຕິການຈັດພິມ ແລະ ໃນເມື່ອຊອກຫາຜູ້ຖືສິດບໍ່ເຫັນ ຕ້ອງຄຳນຶງເຖິງບັນຫາໃນການກຳນົດວ່າ ການຜະລິດຊ້ຳທີ່ໄດ້ສະເໜີມານັ້ນ ເປັນການນຳໃຊ້ທີ່ເໝາະສົມ, ຖ້າວ່າການຜະລິດຊ້ຳດັ່ງກ່າວເປັນໄປຕາມເງື່ອນໄຂຄື: ຜົນງານທີ່ຢຸດຕິການຈັດພິມທີ່ຈະຜະລິດຊ້ຳ ມີພຽງແຕ່ບາງສ່ວນ ແລະ ບໍ່ເກີນ 2 ໜ້າເຈ້ຍຂະໜາດ A4; ຜົນງານທີ່ຈະຜະລິດຊ້ຳ ແມ່ນມີຈຳນວນໜ້ອຍ.

**ມາດຕາ 22 ການຍົກເວັ້ນການນຳໃຊ້ຜົນງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ອີງຕາມຫຼັກການລວມຢູ່ໃນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ການເຮັດສຳເນົາ, ການຜະລິດຊ້ຳ, ການສະແຫວງຫາຜົນປະໂຫຍດຈາກຜົນງານໃດໜຶ່ງ, ການສະແດງ, ການບັນທຶກສຽງ-ພາບ ຫຼື ການກະຈາຍສຽງ-ແຜ່ພາບ ໂດຍບຸກຄົນທີ່ບໍ່ແມ່ນເຈົ້າຂອງສິດ ຖືວ່າເປັນການລະເມີດ ເວັ້ນເສຍແຕ່ໃນກໍລະນີ ດັ່ງນີ້:

1. ການເຮັດສຳເນົາ, ການຜະລິດຊ້ຳ ຫຼື ການສະແຫວງຫາຜົນປະໂຫຍດອື່ນ ໂດຍໄດ້ຮັບອະນຸຍາດຈາກເຈົ້າຂອງສິດ;

2. ຜົນງານທີ່ກຳລັງຖືກສຳເນົາ, ການຜະລິດຊ້ຳ ຫຼື ສະແຫວງຫາຜົນປະໂຫຍດ ທີ່ບໍ່ໄດ້ຮັບການປົກປ້ອງເປັນລິຂະສິດ;

3. ຜົນງານທີ່ກຳລັງຖືກສຳເນົາ, ການຜະລິດຊ້ຳ ຫຼື ສະແຫວງຫາຜົນປະໂຫຍດ ທີ່ບໍ່ເຄີຍໄດ້ຮັບການປົກປ້ອງ ຫຼື ໄດ້ຮັບການປົກປ້ອງແລ້ວ ແຕ່ວ່າໄລຍະເວລາການປົກປ້ອງດັ່ງກ່າວແມ່ນໝົດອາຍຸ;

4. ຜົນງານທີ່ກຳລັງຖືກສຳເນົາ ແມ່ນໄດ້ຮັບການຍົກເວັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

## ໝວດທີ 6
## ການເປັນຜູ້ຕາງໜ້າໃນການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 23 ຜູ້ຕາງໜ້າໃນການແຈ້ງຂໍ້ມູນລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ

ບຸກຄົນທີ່ມີສິດຕາງໜ້າ ໃຫ້ແກ່ເຈົ້າຂອງສິດ ຫຼື ຜູ້ຖືສິດ ໃນການດຳເນີນການແຈ້ງຂໍ້ມູນລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ແລະ ດຳເນີນການອື່ນ ດັ່ງນີ້:

1. ໃນກໍລະນີ ຄຳຮ້ອງດຽວທີ່ມີເຈົ້າຂອງ ຮ່ວມກັນຫຼາຍຄົນ ໃບມອບສິດຕ້ອງມີລາຍເຊັນຂອງໝົດທຸກຄົນ ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງ ຫາກເສຍຊີວິດ;

2. ທະນາຍຄວາມທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ;

3. ບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;

4. ພະນັກງານ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;

5. ພົນລະເມືອງລາວທີ່ຜູ້ແຈ້ງຂໍ້ມູນວ່າຈ້າງ.

ສຳລັບຜູ້ແຈ້ງຂໍ້ມູນແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຜ່ານບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຫຼື ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍ ໃນ ສປປ ລາວ ເທົ່ານັ້ນ.

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມການມອບສິດ ທີ່ເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຫຼື ຜູ້ມອບສິດ.

ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດຫາກບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

### ມາດຕາ 24 ການມອບສິດໃຫ້ເປັນຜູ້ຕາງໜ້າ

ການມອບສິດໃຫ້ເປັນຜູ້ຕາງໜ້າ ຕ້ອງກຳນົດດັ່ງລຸ່ມນີ້:

1. ເງື່ອນໄຂ ແລະ ຂອບເຂດ ຂອງການເປັນຜູ້ຕາງໜ້າ;

2. ສິດທີ່ຖືກມອບໝາຍໃຫ້ດຳເນີນການໃດໜຶ່ງ ທີ່ກ່ຽວຂ້ອງ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;

3. ໄລຍະເວລາ (ຖ້າມີ);

4. ຜູ້ມອບສິດສາມາດຍົກເລີກໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າ ໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆ ທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ.

ໃບມອບສິດໜຶ່ງຕ້ອງນຳໃຊ້ສະເພາະແຕ່ຄຳຮ້ອງດຽວເທົ່ານັ້ນ.

ກໍລະນີ ໃບມອບສິດບໍ່ໄດ້ກຳນົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດຳເນີນການອື່ນ ທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດ ຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວ ຫຼື ການດຳເນີນການອື່ນ ຫາກສຳເລັດແລ້ວ, ແຕ່ບໍ່ເກີນໄລຍະເວລາ ສາມ ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ໃນກໍລະນີ ຜູ້ອອກໃບມອບສິດເປັນ ນິຕິບຸກຄົນ ຫຼື ການຈັດຕັ້ງ ໃບມອບສິດຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອຳນາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ດັ່ງກ່າວ.

ໃນກໍລະນີ ຜູ້ອອກແບບຮ່ວມກັນຫຼາຍຄົນ ຫາກມີຜູ້ໃດຜູ້ໜຶ່ງປະຕິເສດບໍ່ລົງລາຍເຊັນໃນໃບມອບສິດ ຖືວ່າໃບມອບສິດດັ່ງກ່າວ ບໍ່ມີຜົນບັງຄັບໃຊ້.

### ມາດຕາ 25 ການສ້າງສຳນວນເອກະສານຂຶ້ນໃໝ່

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ຫຼື ເຈົ້າຂອງສຳນວນເອກະສານ ສົ່ງສຳເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສຳເນົາດັ່ງກ່າວ ລວມທັງເອກະສານ ຫຼື ສຳນວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານ ຫຼື ເອກະສານອື່ນໆທີ່ເສຍຫາຍ ຫຼື ຊອກບໍ່ເຫັນນັ້ນຂຶ້ນມາໃໝ່.

## ໝວດທີ 7
## ອົງການຈັດຕັ້ງລິຂະສິດແບບລວມໝູ່

### ມາດຕາ 26 ການສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່

ອົງການຈັດຕັ້ງລິຂະສິດແບບລວມໝູ່ ແມ່ນການຈັດຕັ້ງທີ່ສ້າງຂຶ້ນ ເພື່ອເຮັດໜ້າທີ່ໃນການຄຸ້ມຄອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 118, 119 ແລະ 120 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

### ມາດຕາ 27 ການຈົດທະບຽນເປັນອົງການຈັດຕັ້ງລິຂະສິດແບບລວມໝູ່

ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຢາກດຳເນີນການສ້າງຕັ້ງ ອົງການຈັດຕັ້ງລິຂະສິດແບບລວມໝູ່ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນ ຢູ່ກົມຊັບສິນທາງປັນຍາ.

ການຈົດທະບຽນເປັນອົງການຈັດຕັ້ງລິຂະສິດແບບລວມໝູ່ ຕ້ອງຍື່ນຄຳຮ້ອງ ພ້ອມດ້ວຍເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງ ຕາມແບບພິມຂອງກົມຊັບສິນທາງປັນຍາ.

### ມາດຕາ 28 ການສົ່ງເສີມ ແລະ ສະໜັບສະໜູນອົງການຈັດຕັ້ງລິຂະສິດແບບລວມໝູ່

ກົມຊັບສິນທາງປັນຍາ ມີໜ້າທີ່ສົ່ງເສີມ ແລະ ສະໜັບສະໜູນ ອົງການຈັດຕັ້ງລິຂະສິດແບບລວມໝູ່ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ. ໃນການສົ່ງເສີມ ແລະ ສະໜັບສະໜູນດັ່ງກ່າວ ລວມທັງການໃຫ້ຄຳແນະນຳທາງດ້ານກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ການປະຕິບັດຂອງສາກົນ ໂດຍຜ່ານການເຜີຍແຜ່ເອກະສານ, ກອງປະຊຸມປຶກສາຫາລື ແລະ ການສຳມະນາ. ຈຸດປະສົງຂອງການສົ່ງເສີມ ແລະ ການສະໜັບສະໜູນ ເພື່ອຊຸກຍູ້ໃຫ້ການເຄື່ອນໄຫວວຽກງານຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແລະ ປ້ອງກັນ

ການລະເມີດ ຫຼື ໃນກໍລະນີເຫັນວ່າມີການລະເມີດເກີດຂຶ້ນ ຕ້ອງມີການແກ້ໄຂຢ່າງຮີບດ່ວນ ແລະ ນໍາໃຊ້ມາດຕະການ ເພື່ອປ້ອງກັນບໍ່ໃຫ້ມີການລະເມີດເກີດຂຶ້ນອີກ.

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ ແຈ້ງການ ທີ່ກໍານົດນະໂຍບາຍ, ລະບຽບການ ແລະ ຄໍາແນະນໍາຂອງຕົນ ກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງລິຂະສິດແບບລວມໝູ່ ເປັນແຕ່ລະໄລຍະ. ກົມຊັບສິນທາງປັນຍາ ຕ້ອງສ້າງ ແລະ ຮັກສາບັນຊີລາຍຊື່ອົງການຈັດຕັ້ງລິຂະສິດແບບລວມໝູ່ທີ່ໄດ້ຈົດທະບຽນນໍາກົມ ແລະ ເຜີຍແຜ່ບັນຊີລາຍຊື່ດັ່ງກ່າວ ເປັນແຕ່ລະໄລຍະ.

## ໝວດທີ 8
## ການຄຸ້ມຄອງ ວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 29 ການຄຸ້ມຄອງວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ປະກອບມີ ສອງ ຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມຊັບສິນທາງປັນຍາ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ.

### ມາດຕາ 30 ສິດ ແລະ ໜ້າທີ່ ຂອງກົມຊັບສິນທາງປັນຍາ

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາ ກ່ຽວກັບການຄຸ້ມຄອງວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່ແນະນໍາຂໍ້ຕົກລົງສະບັບນີ້ ແລະ ນິຕິກໍາກ່ຽວຂ້ອງກັບ ວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
3. ພິຈາລະນາສໍານວນຄໍາຮ້ອງ ກ່ຽວກັບການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການອະນຸຍາດສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນໍາໃຊ້, ໂອນສິດ ແລະ ການສະເໜີອື່ນກ່ຽວກັບ;
4. ແຈ້ງຂໍ້ມູນລິຂະສິດ, ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
5. ຍົກເລີກ ຫຼື ລຶບລ້າງ ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ອື່ນໆ;
6. ອອກ, ໂຈະ, ຖອນ ໃບອະນຸຍາດ ສ້າງຕັ້ງອົງການຈັດຕັ້ງລິຂະສິດແບບລວມໝູ່;
7. ຄົ້ນຄວ້າ ແລະ ພິຈາລະນາ ຄໍາຊີ້ແຈງການແຈ້ງປະຕິເສດ ກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
8. ຊຸກຍູ້ ແລະ ສົ່ງເສີມ ວຽກງານການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
9. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານອົງການຈັດຕັ້ງລິຂະສິດແບບລວມໝູ່;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ,ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງ, ກວດຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງເອກະສານ ກ່ຽວກັບການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ ;
2. ນຳສົ່ງ ສຳນວນຄຳຮ້ອງ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ກົມຊັບສິນທາງປັນຍາ;
3. ມອບໝາຍຄວາມຮັບຜິດຊອບໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມຄວາມເໝາະສົມ;
4. ຊຸກຍູ້ ແລະ ສົ່ງເສີມ ວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ສະບັບເລກທີ 2824/ກວຕ, ລົງວັນທີ 11 ທັນວາ 2019. ຊ

**ລັດຖະມົນຕີ**

ມະໄລທອງ ກົມມະສິດ